ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ກອງປະຊຸມສຳມະນາ ວິທີການຄາດຄະເນອັດຕາເງິນເຟີ້ຂອງ ສປປ ລາວ




ໃນຕອນເຊົ້າ ຂອງວັນທີ 26 ພຶດສະພາ 2023 ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຮ່ວມກັບອົງການຈັດຕັ້ງສາກົນ IMF ໄດ້ຈັດກອງປະຊຸມສຳມະນາດ້ານວິຊາການໃນຫົວຂໍ້ວິທີການຄາດຄະເນອັດຕາເງິນເຟີ້ຂອງ ສປປ ລາວ ຊຶ່ງກອງປະຊຸມສຳມະນາໃນຄັ້ງນີ້ໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ມີນັກວິທະຍາກອນບັນຍາຍວິທີການຄາດຄະເນເງິນເຟີ້ ຕາງໜ້າອົງການຈັດຕັ້ງສາກົນ IMF ໂດຍ ທ່ານ Alasdair Scott, ຫົວໜ້າຄະນະປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ພ້ອມນີ້ມີຜູ້ເຂົ້າຮ່ວມຈາກພາກສ່ວນຕ່າງໆທີ່ເປັນທັງຜູ້ຄິດໄລ່ ແລະ ຜູ້ຊົມໃຊ້ຂໍ້ມູນ ອັດຕາເງິນເຟີ້ຂອງ ສປປ ລາວ ພ້ອມທັງອົງການຈັດຕັ້ງສາກົນ ໂດຍສະເພາະແມ່ນຜູ້ຕາງໜ້າຈາກ ທະນາຄານໂລກ (WB) ແລະ ອົງການ JICA.  ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອແລກປ່ຽນວິທີການ, ເຕັກນິກນຳໃຊ້ເຂົ້າໃນການຄາດຄະເນອັດຕາເງິນເຟີ້ຂອງ ສປປ ລາວ ລະຫວ່າງ ທຫລ ແລະ ອົງການຈັດຕັ້ງສາກົນ.





ຜ່ານການປຶກສາຫາລື ແລະ ແລກປ່ຽນຄໍາຄິດເຫັນລະຫວ່າງ ທຫລ ແລະ ອົງການຈັດຕັ້ງສາກົນ ເຊິ່ງເຫັນວ່າມີຄວາມສໍາຄັນ ແລະ ເປັນປະໂຫຍດຫຼາຍສໍາລັບນັກສໍາມະນາກອນ ໃນການຮຽນຮູ້ ແລະ ເຂົ້າໃຈນໍາໄປໝູນໃຊ້, ດັດປັບໃຫ້ເຂົ້າກັບວຽກງານຕົວຈິງ.

ກອງປະຊຸມໄດ້ດໍາເນີນເປັນເວລາເຄິ່ງວັນດ້ວຍຜົນສໍາເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ຂ່າວ-ພາບ ຈາກ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ



ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນໍາໃຊ້ເງິນກີບ